**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ກະຊວງສາທາລະນະສຸກ ເລກທີ ________ /ສທ

ນະຄອນຫຼວງວຽງຈັນ, ວັນທີ

# ຄໍາສັ່ງເພີ່ມເຕີມ

## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ

**ເຖິງ:** ທ່ານຫົວໜ້າພະແນກສາທາລະນະສຸກແຂວງໃນທົ່ວປະເທດ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ:** ເອົາໃຈໃສ່**ທົບທວນ**ຄືນຜົນຂອງການຈັດຕັ້ງປະຕິບັດ ວສຊ ເພື່ອກໍາຈັດພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍທີ່ໄດ້ຈັດຕັ້ງປະຕິບັດ ແຕ່ວັນທີ 17 ພະຈິກ 2014 ເປັນຕົ້ນມາ.

- ອີງຕາມ: ຜົນຂອງການລາຍງານເບື້ອງຕົ້ນໃນການຈັດຕັ້ງປະຕິບັດ ວສຊ ໄດ້ສ່ອງແສງໃຫ້ເຫັນເຖິງໝາກຜົນສໍາເລັດອັນໃຫຍ່ຫຼວງ ໃນທຸກແຂວງ ແລະ ທຸກເມືອງໃນທົ່ວປະເທດ, ເຖິງຢ່າງໃດກໍ່ຕາມ ຍັງມີບາງບ້ານໂດຍສະເພາະແມ່ນບ້ານເຂດເຜົ່າມົ້ງ, ອາຄ່າ ແລະ ບ້ານທີ່ເຂົ້າເຖິງຍາກຍັງບໍ່ທັນບັນລຸ 95%.
- ອີງຕາມ: ຜົນການລາຍງານຂອງການກວດກາຄືນຢ່າງວ່ອງໄວຂອງທີມງານສາກົນ, ທີມງານສູນກາງ ແລະ ທີມງານແຂວງໂດຍການກວດນັບ ການທາສີເລັບ ແລະ ກວດບັດ.

**ເພື່ອເປັນການແກ້ໄຂບັນຫາດັ່ງກ່າວ ໃຫ້ທັນກັບສະພາບການ**
**ລັດຖະມົນຕີວ່າການກະຊວງສາທາລະນະສຸກ ຈຶ່ງໄດ້ອອກແຈ້ງການດ່ວນ**
**ມາຍັງທ່ານຫົວໜ້າພະແນກສາທາລະນະສຸກແຂວງ ໃນທົ່ວປະເທດ ແລະ ນະຄອນຫຼວງວຽງຈັນ ຄື:**

1. ໃຫ້ການນໍາພະແນກສາທາລະນະສຸກແຂວງ ນໍາພາຂະແໜງການແມ່ ແລະ ເດັກ, ສັກຢາກັນພະຍາດ ແລະ ທີມງານແພດທຸກຂັ້ນ ຈົ່ງຮີບຮ້ອນກວດກາຄືນ ແລະ ສ້າງບັນຊີບ້ານທີ່ເຫັນວ່າມີການພາດໂອກາດ ມີເດັກບໍ່ໄດ້ສັກຢາຈໍານວນຫຼາຍ ແລ້ວລາຍງານໃຫ້ອໍານາດການປົກຄອງຂັ້ນເມືອງຊາບ ເພື່ອວາງແຜນປຸກລະດົມ ແລະ ນໍາເອົາວັກຊີນກັນພະຍາດໝາກແດງໄປສັກໃຫ້ຜູ້ທີ່ພາດໂອກາດອາຍຸ 10 ປີລົງມາ, ໃຫ້ນໍາໄປສັກພ້ອມກັນກັບການລົງເຄື່ອນໄຫວສັກຢາຮອບປົກກະຕິຮອບສຸດທ້າຍໃນອາທິດທີ 03-04 ຂອງເດືອນທັນວາ 2014 ນີ້.

2. ສະເພາະບ້ານທີ່ບໍ່ມີການພາດໂອກາດຫຼາຍ ແມ່ນໃຫ້ປະກາດເອົາເດັກນ້ອຍລຸ່ມ 05 ປີ ຜູ້ທີ່ພາດໂອກາດເທົ່ານັ້ນມາສັກ.

3. ໃນບ້ານທີ່ໃກ້ໃນເຂດຄິງທີ່ ໃກ້ກັບໂຮງໝໍແຂວງ, ໂຮງໝໍເມືອງ ແລະ ສຸກສາລາ ແມ່ນໃຫ້ປະກາດໃຫ້ພໍ່ແມ່ປະຊາຊົນນຳເອົາຜູ້ທີ່ພາດໂອກາດມາສັກໃນເຂດຄິງທີ່, ໃຫ້ຂະແໜງສາທາລະນະສຸກປະກາດແຈ້ງການທາງວິທະຍຸ, ໂທລະໂຄ່ງ ຫຼື ໂທລະພາບໃຫ້ທົ່ວເຖິງ.

4. ສະເພາະເປົ້າໝາຍທີ່ຢູ່ໃນໂຮງຮຽນ ຜູ້ທີ່ພາດໂອກາດ ແມ່ນໃຫ້ປະສານນຳ ຫົວໜ້າອຳນວຍການໂຮງຮຽນ ຖ້າມີເປົ້າໝາຍພາດໂອກາດຈຳນວນຫຼາຍ ແມ່ນໃຫ້ທີມແພດໄປສັກໃຫ້ຢູ່ໂຮງຮຽນ, ຖ້າມີເປົ້າໝາຍພາດໂອກາດບໍ່ ຫຼາຍ ແມ່ນໃຫ້ລະດົມໃຫ້ຄູນຳມາສັກຢູ່ສະຖານທີ່ບໍລິການສາທາລະນະສຸກໃກ້ໂຮງຮຽນ.

5. ໃຫ້ຂັ້ນແຂວງສືບຕໍ່ລາຍງານໃຫ້ຂັ້ນສູນກາງ ແລະ ແຍກກຸ່ມອາຍຸມາພ້ອມ: 09 - 11 ເດືອນ, 01 ປີ - 05 ປີ ແລະ 05 - ລຸ່ມ 10 ປີ.

6. ມອບໃຫ້ຫ້ອງການກະຊວງ, ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ສູນແມ່ ແລະ ເດັກ, ພະແນກສາທາລະນະສຸກແຂວງ ແລະ ຫ້ອງການສາທາລະນະສຸກເມືອງ ຈົ່ງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງຮັດກຸມ, ສຳລັບງົບປະມານແມ່ນໃຫ້ນຳໃຊ້ງົບເຄື່ອນໄຫວປົກກະຕິທີ່ໄດ້ສະໜອງໃຫ້ຈາກສູນກາງ ຫຼື ຈາກບັນດາຄູ່ຮ່ວມພັດທະນາ, ຖ້າຫາກບໍ່ພຽງພໍກໍໃຫ້ພະແນກສາທາລະນະສຸກແຂວງປະກອບສ່ວນ.

7. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຊັນແທນ** ລັດຖະມົນຕີວ່າການກະຊວງສາທາລະນະສຸກ